**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຈຳປາສັກ

ພະແນກສຶກສາທິການ ແລະ ກິລາແຂວງ

ເລກທີ: 1247 ສກຂ.ຈສ

ແຂວງຈຳປາສັກ, ວັນທີ: 21 ກໍລະກົດ 2026

# ແຈ້ງການ

ເຖິງ: ບັນດາບໍລິສັດຜູ້ຮັບເໝົາກໍ່ສ້າງ ທີ່ມີຄວາມສົນໃຈ ເຂົ້າຮ່ວມປະມູນ ທາບທາມລາຄາ ໂຄງການກໍ່ສ້າງໂຮງຮຽນ ມັດທະຍົມຕົ້ນ ໃໝ່ໄຊສົມບູນ **ແຂວງຈຳປາສັກ** ດ້ວຍແຜນງົບປະມານລັດຖະບານ ສົກປີ 2026 ແລະ ໂຄງການ ຈັດຊື້ ວັດສະດຸສົມທົບປະຊາຊົນ ທົ່ວແຂວງ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 82/ນຍ, ລົງວັນທີ 15 ພຶດສະພາ 2008 ວ່າດ້ວຍລະບຽບລັດຖະກອນແຫ່ງ ສ.ປ.ປ ລາວ ;
- ອີງຕາມ ດຳລັດຂອງກະຊວງການເງິນ ສະບັບເລກທີ 63/ກງ, ລົງວັນທີ 12 ມີນາ 2014 ວ່າດ້ວຍການປະມູນ, ການຈັດຊື້ສິນຄ້າ, ການກໍ່ສ້າງ, ສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ ;
- ອີງຕາມ ແຜນງົບປະມານຂອງແຂວງ ສົກປີ 2026.

<u>ມີຈຸດປະສົງ:</u> ເຊີນບັນດາບໍລິສັດຜູ້ຮັບເໝົາກໍ່ສ້າງ ທີ່ມີຄວາມສົນໃຈເຂົ້າຮ່ວມຊື້ຊອງປະມູນ ຈານວນ 2 ພູດ ດັ່ງລາຍລະອຽດລຸ່ມນີ້:

| ລ/ດ | ຊື່ກິດຈະກຳ | ເມືອງ | ແຂວງ | ຂະໜາດອາຄານ | ແຫຼ່ງທຶນ |
|---|---|---|---|---|---|
| 1 | ໂຄງການກໍ່ສ້າງໂຮງຮຽນ ມັດທະຍົມຕົ້ນ ໃໝ່ໄຊສົມບູນ | ປາກຊ່ອງ | ຈຳປາສັກ | 7 m x 16 m | ລັດ (ບ້ວງແຂວງ) |
| 2 | ໂຄງການ ຈັດຊື້ ວັດສະດຸສົມທົບປະຊາຊົນ ທົ່ວແຂວງ | 9 ຕົວເມືອງ 1 ນະຄອນ | ຈຳປາສັກ | | ລັດ (ບ້ວງແຂວງ) |

ເງື່ອນໄຂຂອງຜູ້ເຂົ້າຮ່ວມ ການປະມູນສົມທຽບລາຄາ ລະອຽດດັ່ງລຸ່ມນີ້:

1. ຕ້ອງມີໃບອະນຸຍາດດຳເນີນທຸລະກິດ, ໃບທະບຽນວິສະຫະກິດ ເປັນບໍລິສັດກໍ່ສ້າງເຄຫາສະຖານ ແລະ ມີໃບຢັ້ງຢືນວ່າໄດ້ເສຍອາກອນ ຖືກຕ້ອງທາງກົດໝາຍ ຄັດຕິດໜັງສືສະເໜີ ລາຄາສະເໜີໃນມື້ເປີດຊອງ
2. ຕ້ອງເຫັນດີຈິ່ງໃຈ ປະຕິບັດໃນເອກະສານສັນຍາ, ຂໍ້ກຳນົດ ແລະ ກົດລະບຽບຕ່າງໆທີ່ກຳນົດໄວ້.

3. ບໍລິສັດ ຕ້ອງມີທຸກລາຍການເຄື່ອງວັດສະດຸ ແລະ ສະເໜີລາຄາໃນຫົວໜ່ວຍລາຄາ, ລາຄາລວມ ແຕ່ລະລາຍການ ລາຄາລວມຍອດທັງໝົດຢ່າງຈະແຈ້ງ.
4. ຕ້ອງສະເໜີລາຄາຄົບຖ້ວນ ທັງໝົດລາຍການ, ຕົວເລກມູນຄ່າການປະມູນຕ້ອງຈະແຈ້ງ ຫ້າມມີຮອຍຂີດຂ້າ ແລະ ຮອຍລຶບເດັດຂາດ.
5. ຕ້ອງມີເງິນທຶນໝູນວຽນ 30 % ຂອງມູນຄ່າໂຄງການ.
6. ຕ້ອງມີເງິນຄ້ຳປະກັນຊອງປະມູນ 2% ຂອງມູນຄ່າ ໃນມື້ເປີດຊອງ, ເປັນເຊັກທີ່ວິຊາຈາກທະນາຄານ ທີ່ເຊື່ອຖືໄດ້.
7. ມູນຄ່າຫົວໜ່ວຍລາຄາໃນມື້ເປີດຊອງບໍລິສັດທີ່ໄດ້ທີ 1 ຈະໄດ້ຄົ້ນຄ້ວາເອກະສານ ເພື່ອກວດກາເງື່ອນໄຂ ຄົບຖ້ວນຈາກຄະນະກອງເລຂາ ແລ້ວສົ່ງເອກະສານໃຫ້ປະທານເປັນຜູ້ຕັດສິນໃນມື້ເປີດຊອງ.
8. ເງິນຄ້ຳປະກັນຊອງປະມູນ 2% ຈະຖອນໄດ້ກໍ່ຕໍ່ເມື່ອມີແຈ້ງການ ເຖິງຜູ້ຊະນະການປະມູນ ແລະ ສາເລັດການເຊັນສັນຍາການກໍ່ສ້າງ ( ທັງຜູ້ຊະນະ ແລະ ຜູ້ບໍ່ຊະນະ )
9. ບໍລິສັດທີ່ຊະນະການປະມູນຕ້ອງໄດ້ເຊັນສັນຍາຕ້ອງໄດ້ສຳລະຄ່າອອກແບບໃຫ້ແກ່ບໍລິສັດຜູ້ອອກແບບ ກ່ອນລົງມືປະຕິບັດ.

ບໍລິສັດ ທີ່ມີຄວາມສົນໃຈ ເຊີນຕິດຕໍ່ພົວພັນ ແລະ ສອບຖາມລາຍລະອຽດໄດ້ທີ່ ພະແນກສຶກສາທິການ ແລະ ກິລາແຂວງ (ຂະແໜງບໍລິຫານ ແລະ ການເງິນ ໂທ: 020 22266233 , 020 9139 4292) ນັບແຕ່ວັນທີ 21 ກໍລະກົດ ຫາວັນທີ 06 ກັນຍາ ໃນມູນມູນຄ່າຊອງລະ 800,000 ກີບ, ວັນເວລາສົ່ງຊອງກ່ອນເວລາ 1: 30 ໂມງຂອງວັນທີ 10 ກັນຍາ 2026, ຈະໄດ້ເປີດຊອງຊ້ອງໜ້າກຳມະການ ແລະ ບໍລິສັດຜູ້ເຂົ້າຮ່ວມປະມູນ ໃນເວລາ 14:00 ໂມງຂອງວັນດຽວກັນ.

ດັ່ງນັ້ນ, ພະແນກສຶກສາທິການ ແລະ ກິລາແຂວງ ຈຶ່ງໄດ້ແຈ້ງມາຍັງບັນດາບໍລິສັດ ກໍ່ສ້າງເຄຫາສະຖານ, ຮ້ານວັດສະດຸທີ່ມີຄວາມສົນໃຈ ເພື່ອຊາບ ແລະ ເຂົ້າຮ່ວມການປະມູນຄັ້ງນີ້ດ້ວຍ.

ຫົວໜ້າພະແນກ

ກະຊວງສຶກສາທິການ ແລະ ກິລາ
ພະແນກ ສຶກສາທິການ ແລະ ກິລາ
ແຂວງຈຳປາສັກ

ວຽງນະຄອນ ບົວລະພັນ